# ການຈະເລີນເຕີບໂຕ ຂອງເພດຊາຍ



ຄວາມຮູ້ກ່ຽວກັບ ການປ່ຽນແປງທາງດ້ານຮ່າງກາຍ,

ອາລົມ ແລະ ຄວາມຮູ້ສຶກຂອງ ຜູ້ຊາຍ ແຕ່ນ້ອຍຈົນເຖິງໄວໜຸ່ມ

# ການເຕີບໃຫຍ່ຂະຫຍາຍຕົວຂອງຜູ້ຊາຍ



ອາຍຸ 6 ເດືອນ



ອາຍຸ 4 - 5 ປີ



ອາຍຸ 8 - 9 ປີ



ອາຍຸ 12 - 13 ປີ



ອາຍຸ 15 - 16 ປີ



ອາຍຸ 18 - 24 ປີ

# ການປ່ຽນແປງພາຍນອກຂອງຮ່າງກາຍ




ເດັກນ້ອຍ ຕັ້ງແຕ່ແລກເກີດແມ່ນ ໄດ້ຮັບການເອົາໃຈໃສ່ດູແລເບິ່ງແຍງຈາກພໍ່ແມ່ຢ່າງໃກ້ຊິດ ຈິ່ງເຮັດໃຫ້ລາວມີສຸຂະພາບດີ ແລະ ໃຫຍ່ໄວ.




ເດັກນ້ອຍຜູ້ຊາຍ ໃນໄລຍະ 2 - 4 ປີ ຈະມີຮ່າງກາຍແຂງແຮງ, ແລ່ນທັນ, ສາມາດປາກເວົ້າໄດ້, ເລີ້ມສະຫຼາດ, ຢາກຮູ້ ຢາກເຫັນ, ຢາກໄດ້, ມັກມີຄຳຖາມ, ມັກຮຽກຮ້ອງຄວາມສົນໃຈຈາກພໍ່ແມ່.




ເມື່ອອາຍຸໄດ້ 6 - 9 ປີແມ່ນໄລຍະທີ່ກິນຫຼາຍ ແລະ ນອນຫຼັບດີ.




ເມື່ອກ້າວສູ່ໄວໜຸ່ມອາຍຸ 10 - 19 ປີ ສຽງເວົ້າຈະມີການປ່ຽນແປງ ຄື: ສຽງຄໍເຄືອ, ສຽງແຕກ ຫຼື ສຽງໃຫຍ່ຂຶ້ນ.




ເລີ້ມມີຕຸ່ມສິວຂຶ້ນຢູ່ໃບໜ້າ, ມີອາການເຈັບນົມ ( ນົມຕຸ່ມ ).




ໂຄງກະດູກຈະແຂງແຮງ, ນ້ຳໜັກ ແລະ ລວງສູງເພີ້ມຂຶ້ນ, ບ່າໄຫຼ່ກວ້າງອອກ. ແຂນຂາໜ້າເອິກ ຈະມີເສັ້ນເອັນ, ກ້າມຊີ້ນຈະເປັນກ້ອນໆ. ມີຜົມດົກໜາ ແລະ ຍາວໄວ, ອະໄວຍະວະເພດໃຫຍ່ຂຶ້ນ ແລະ ມີຂົນ, ຢູ່ຂີ້ລັກແຮ້ມີກິ່ນເຫື່ອ, ມີໜວດຢູ່ຮີມສົບ ແລະ ຄາງ.

# ລະບົບການຜະລິດນ້ຳອະສຸຈິ




ກົງອັນທະມີໜ້າທີ່ ປົກປ້ອງລູກອັນທະ ແລະ ຮັກສາອຸນນະພູມ
ໃຫ້ສະໝ່ຳ ສະເໝີ ເພື່ອຜະລິດຕົວອະສຸຈິ




ໃນລູກອັນທະຈະມີທໍ່ນ້ອຍໆຂົດຢູ່ໃນນັ້ນເປັນແສນໆ ຊຶ່ງເປັນ
ບ່ອນຜະລິດຕົວອະສຸຈິ



ຫລັງຈາກທີ່ຕົວອະສຸຈິເຕີບໃຫ່ຽສົມບູນ ແລ້ວ ຈະມາລໍາ້ກາສິ່ງ
ອອກໃນເວລາທີ່ມີການຮ່ວມເພດ ໃນການຮ່ວມເພດແຕ່ລະຄັ້ງ
ຜູ້ຊາຍປ່ອຍຕົວອະສຸຈິປະມານ 100 - 600 ລ້ານຕົວແຕ່ມີຕົວ
ດຽວທີ່ໄປປະສົມກັບໄຂ່ຂອງແມ່ຍິງ ແລະ ສາມາດມີລູກໄດ້



ອະໄວຍະວະເພດຈະໃຫຍ່ຂຶ້ນ ແລະ ມີຄວາມຮູ້ສຶກທາງເພດ, ເມື່ອ ຝັນຮ່ວມເພດກັບເພດຍິງ ຈະມີນໍ້າອະສຸຈິໄຫລອອກມາຈາກ ປາຍ ອະໄວຍະວະເພດ (ຝັນປຽກ),



ຮຽນຮູ້ການສຳເລັດຄວາມໄຄ້ ດ້ວຍຕົນເອງ (ຊັກວ່າວ). ຖ້າມີເພດສຳພັນກັບເພດຍິງ ແບບບໍ່ມີການປ້ອງກັນຈະເຮັດໃຫ້ແມ່ຍິງນັ້ນມີລູກໄດ້.

# ການປ່ຽນແປງດ້ານຮ່າງກາຍພາຍນອກ ຂອງເພດຊາຍທົ່ວໄປ.



# ຄວາມແຕກຕ່າງທາງດ້ານຮ່າງກາຍຂອງເພດຍິງ ແລະ ເພດຊາຍໃນໄລຍະໄວໜຸ່ມ



# ການປ່ຽນແປງດ້ານອາລົມ ແລະ ຄວາມຄິດຂອງຊາຍ  ໜຸ່ມ







ຊາຍໜຸ່ມໃນໄວນີ້ ມັກຈະສະແດງອອກເຖິງຄວາມເດັ່ນ, ຄວາມສາມາດ ເໜືອຜູ້ອື່ນ ທາງດ້ານຄວາມຄິດ, ຄວາມເກັ່ງກ້າ, ມີຄວາມຄຶກຄະນອງ ບາງເທື່ອກໍ່ມີອາລົມຫງຸດຫງິດ.








ເວລາເປັນໜຸ່ມເຕັມຕົວ ຈະມີຄວາມສົນໃຈຕໍ່ເພດກົງກັນຂ້າມ ສະແດງອອກຢ່າງເດັ່ນຊັດ. ມີຄວາມຮູ້ສຶກຕ້ອງການທາງເພດຕາມທຳມະຊາດ.






ໃນຂະນະດຽວກັນນັ້ນ ຈະເລີ້ມມີຄວາມຕ້ອງການ ຄວາມເປັນອິດສະລະ ຢາກຮັບຜິດຊອບຕົນເອງ ແລະ ສະແດງລັກສະນະເປັນຜູ້ໃຫຍ່ຂຶ້ນ, ເຊື່ອເພື່ອນຫລາຍກ່ວາພໍ່ແມ່, ຖ້າຄົບເພື່ອນບໍ່ດີ ຈະພາຕົນເອງກ້າວເຂົ້າສູ່ອະບາຍຍະມຸກ ( ສິ່ງບໍ່ດີ ).







ເມື່ອຖືກຊັກຈູງຈາກ ໝູ່ຄູ່ທີ່ບໍ່ດີ, ເຫັນແບບຢ່າງທີ່ບໍ່ດີຂອງຜູ້ໃຫຍ່ ຫຼືມີຄວາມກົດດັນທາງດ້ານຈິດໃຈຈະເຮັດໃຫ້ຊາຍໜຸ່ມໃນໄລຍະນີ້ ຮູ້ສຶກອ່ອນໄຫວ ແລະ ຄິດຢາກທົດລອງ ລືມນຶກຄິດເຖິງຜົນຮ້າຍ ທີ່ຈະຕາມມາ.



ໄວໜຸ່ມມີເພດສຳພັນ
ແບບບໍ່ມີການປ້ອງກັນ.



ການຖືພາ
ແບບບໍ່ຕ້ອງການ.

## ການຕິດເຊື້ອພະຍາດຕິດຕໍ່ທາງເພດສຳພັນ **STDs**



**STDs**



ພະຍາດພູມຕ້ານ
ທານເຊື່ອມ **HIV**



ໂລກເອດ **AIDS**

ຖ້າມີເພດສຳພັນແບບບໍ່ມີການປ້ອງກັນ ຈະເຮັດໃຫ້ແມ່ຍິງ
ຖືພາ ແລະ ສ່ຽງຕໍ່ການຕິດເຊື້ອພະຍາດ ທາງເພດສຳພັນ.



ໄວໜຸ່ມມີເພດສຳພັນ
ແບບມີການປ້ອງກັນ.






ທາງທີ່ດີໄວໜຸ່ມ ຄວນຮູ້ຈຳແນກສິ່ງດີ ສິ່ງບໍ່ດີ, ຕ້ອງມີແນວຄິດກວ້າງໄກ, ຄວນຄິດເຖິງສຸຂະພາບ ແລະ ອະນາຄົດຂອງຕົນເອງເປັນສິ່ງສຳຄັນໃນຊີວິດ.





ຊາວໜຸ່ມ ຄວນໃຊ້ເວລາຫວ່າງໃຫ້ເປັນປະໂຫຍດ ໂດຍສຶກສາຮ່ຳຮຽນເອົາວິຊາຄວາມຮູ້, ໝັ່ນຄົ້ນຄວ້ານຳ ຄູອາຈານ ແລະ ໝູ່ຄູ່, ອ່ານປຶ້ມໃນຫ້ອງສະມຸດ,










ເຂົ້າຮ່ວມກິດຈະກຳພັດທະນາ ສົ່ງເສີມຊາວໜຸ່ມ ເຊັ່ນ:ໂຄສະນາ ສິ່ງທີ່ເປັນປະໂຫຍດ, ຫຼິ້ນດົນຕີ, ຫຼິ້ນກິລາ, ອອກແຮງງານ ລວມໝູ່...









ໜຸ່ມສາວທີ່ມີຄວາມຮັກຕໍ່ກັນ ແລະ ຕັດສິນໃຈທີ່ຈະໃຊ້ຊີວິດຢູ່ຮ່ວມກັນ ຄວນໄປກວດເລືອດກ່ອນແຕ່ງງານ ເພື່ອຄວາມປອດໄພ ທາງດ້ານສຸຂະພາບ ແລະ ເພື່ອປ້ອງກັນການຕິດເຊື້ອພະຍາດທາງເພດສຳພັນ.









ຄວາມຮັກທີ່ຖືກຕ້ອງ ຂອງ ຄູ່ບ່າວ ສາວ ຕ້ອງມີການສູ່ຂໍ,
ຈົດທະບຽນແຕ່ງງານເປັນທາງການ ແລ້ວຈຶ່ງຈັດພິທີແຕ່ງ
ດອງຕາມຮີດຄອງປະເພນີ ອັນດີງາມຂອງຊາດລາວເຮົາ.

ພິມຄັ້ງທີ່ VI ຈັດພິມຈຳນວນ 4.600 ໃນປີ 2010
ຫ້າມພິມ/ຈຳໜ່າຍ/ແຈກຢາຍໂດຍບໍ່ໄດ້ຮັບອະນຸຍາດ
ຈາກໂຄງການ UNFPA
ພິມທີ່: ປານຄຳ ຈຳປາ ການພິມ